Media Release

Cambodia • Lao PDR • Thailand • Viet Nam
For sustainable development

ເພື່ອການເຜີຍແຜ່

# ວັນເວລາ ຂອງການເລີ້ມຂະບວນການປຶກສາຫາລືກັນກ່ອນ ຂອງໂຄງການເຂື່ອນໄຟຟ້າ ພະລັງນໍ້າປາກລາຍ ໄດ້ຖືກຕົກລົງ

**ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 9 ສິງຫາ 2018**– ຄະນະເຮັດວຽກສະເພາະກິດ ກ່ຽວກັບລະບຽບວ່າດ້ວຍການແຈ້ງການໃຫ້ຊາບ, ການປຶກສາຫາລືກັນກ່ອນ ແລະ ການເຮັດຂໍ້ຕົກລົງ ຂອງຄະນະກຳມາທິການແມ່ນໍ້າຂອງສາກົນ ໄດ້ຕົກລົງເຫັນດີ ວັນເວລາທີ່ໃຫ້ເລີ້ມດຳເນີນຂະບວນການປຶກສາຫາລືກັນກ່ອນເປັນເວລາຫົກເດືອນ  ສຳລັບໂຄງການເຂື່ອນໄຟຟ້າພະລັງງານນໍ້າປາກລາຍ 770 - ເມກາວັດ ໃນເຂດແມ່ນໍ້າຂອງຕອນເທິງຂອງ ສປປ ລາວ.

ຄະນະເຮັດວຽກສະເພາະກິດ, ໃນນັ້ນສະມາຊິກລວມມີບັນດາຜູ້ຕາງໜ້າພະນັກງານຂັ້ນອາວຸໂສ ຈາກ ຣາຊະອານາຈັກກຳປູເຈຍ, ສປປ ລາວ , ຣາຊະອານາຈັກໄທ ແລະ ສ.ສ ຫວຽດນາມ ແລະ ຄະນະດັ່ງກ່າວຍັງເຮັດຫນ້າທີ່ ເປັນທີ່ປຶກສາໃຫ້ກັບ ຄະນະກຳມະການຮ່ວມ ຄມສ ໃນການຈັດຕັ້ງປະຕິບັດລະບຽບການ, ໄດ້ມີການປະກາດການຕົກລົງເຫັນດີຮ່ວມກັນ ພາຍຫຼັງທີ່ໄດ້ມີການປຶກສາຫາລືກັນຢ່າງລະອຽດ ໃນກອງປະຊຸມວິຊາການຄັ້ງທຳອິດຂອງຄະນະສະເພາະກິດ ທີ່ໄດ້ປິດລົງ ໃນວັນທີ 8 ສິງຫາ 2018 ທີ່ ນະຄອນຫຼວງວຽງຈັນ. ຄະນະວິຊາການສະເພາະກິດໄດ້ກຳນົດເອົາວັນທີ 8 ສິງຫາ 2018 ເປັນວັນເລີ້ມຂະບວນການ.

"ການປຶກສາຫາລືກັນກ່ອນຈະສ້າງໂອກາດໃຫ້ກັບປະເທດທີ່ໄດ້ມີການແຈ້ງ, ບັນດາຊຸມຊົນ ແລະ ພາກສ່ວນທີ່ຈະໄດ້ຮັບຜົນກະທົບໃນການທົບທວນໂຄງການ ແລະ ຍົກໃຫ້ເຫັນເຖິງຄວາມກັງວົນຂອງເຂົາເຈົ້າ ກ່ຽວກັບຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ ແລະ ຄົນ ລະຫວ່າງຊາຍແດນ. ຂະບວນການດັ່ງກ່າວຍັງໄດ້ໃຫ້ໂອກາດປະເທດທີ່ສະເໜີໂຄງການ ໃຫ້ເຂົ້າໃຈເຖິງບັນດາຄວາມກັງວົນ ແລະ ກຳນົດບັນດາມາດຕະການໃນການຮັບມື," ກ່າວໂດຍທ່ານ ເຕ ນາວຸດ, ປະທານຄະນະເຮັດວຽກສະເພາະກິດ ຂອງຄະນະກຳມະການຮ່ວມ.

ຄະນະເຮັດວຽກສະເພາະກິດ ຍັງໄດ້ມີການປຶກສາຫາລືກ່ຽວກັບຂໍ້ສະເຫນີ ຂອງ ທ່ານ ຟາມ ຕວນ ຟານ ຫົວຫນ້າກອງເລຂາ ຄມສ ໃນການເລື່ອນຂະບວນການປຶກສາຫາລືກັນກ່ອນອອກໄປກ່ອນ. ຂໍ້ສະເຫນີດັ່ງກ່າວ ຍັງສອດຄ່ອງກັບການປະກາດ ຂອງນາຍົກລັດຖະມົນຕີ ຂອງ ສປປ ລາວ ໃນການກວດສອບເຂື່ອນທັງໝົດ ແລະ ການໂຈະການພິຈາລະນາຂໍ້ສະເຫນີຂໍລົງທຶນການກໍ່ສ້າງເຂື່ອນໄຟຟ້າພະລັງນໍ້າໃນ ສປປ ລາວ. ຄະນະຜູ້ແທນ ສປປ ລາວ ໄດ້ແຈ້ງໃຫ້ຊາບວ່າ ລັດຖະບານ ສປປ ລາວ ຈະ ມີການຊີ້ແຈງອະທິບາຍຢ່າງເປັນທາງການໃນໄວໆນີ້.

“ສໍາລັບຂະບວນການປຶກສາຫາລືກັນກ່ອນ, ກອງເລຂາ ຄມສ ຈະພະຍາຍາມຢ່າງສຸດຄວາມສາມາດໃນການປະຕິບັດພາລະບົດບາດຂອງພວກເຮົາ, ດັ່ງທີ່ໄດ້ກໍານົດໄວ້ໃນລະບຽບການ ແລະ ສັນຍາແມ່ນໍ້າຂອງ ປີ 1995, ເພື່ອອໍານວຍຄວາມສະດວກບັນດາການປຶກສາຫາລືກັບພາກສວນທີ່ກ່ຽວຂ້ອງ ໃນລັກສະນະສ້າງສັນ ແລະ ມີການເກັບກໍາບັນດາຄໍາເຫັນ ແລະ ທັດສະນະ ເພື່ອລາຍງານແກ່ການຈັດຕັ້ງຂັ້ນສູງ ຂອງ ຄມສ ແລະ ສະເໜີຄໍາເຫັນ ຕາມເວລາທີ່ກໍານົດໄວ້ ແລະ ມີລັກສະນະໂປ່ງໃສ,” ກ່າວໂດຍ ທ່ານ ຟາມ ຕວນ ຟານ, ຫົວໜ້າກອງເລຂາ ຄມສ.

ການປຶກສາຫາລືກັນກ່ອນ ຈະປະກອບມີ ສອງກອງປະຊຸມຂອງພາກສ່ວນທີ່ກ່ຽວຂ້ອງໃນລະດັບພາກພື້ນ ແລະ ການລົງຢ້ຽມຢາມພາກສະໜາມໃນເຂດໂຄງການປາກລາຍ ໃນລະຫວ່າງການດໍາເນີນຂະບວນການໃນຊ່ວງເວລາຫົກເດືອນ. ກອງປະຊຸມພາກສ່ວນທີ່ກ່ຽວຂ້ອງໃນລະດັບຊາດຈະໄດ້ຈັດຂຶ້ນຢູ່ບັນດາປະເທດສະມາຊິກ ເພື່ອປຶກສາຫາລື ແລະ ເກັບກໍາສະພາບບັນດາຄວາມກັງວົນ ເພື່ອລວມເຂົ້າໃນຂະບວນການດັ່ງກ່າວ.

ການປຶກສາຫາລືກັນກ່ອນ ແມ່ນພາກສວນໜຶ່ງຂອງບັນດາລະບຽບການ ຂອງ ຄມສ ໃນການຮ່ວມມືໃນການນໍາໃຊ້ນໍ້າໃນລໍານໍ້າຂອງ  ເຊິ່ງໄດ້ລະບຸໃນລະບຽບວ່າດ້ວຍການແຈ້ງໃຫ້ຊາບ ການປຶກສາຫາລືໃນເບື້ອງຕົ້ນ ແລະ ການເຮັດຂໍ້ຕົກລົງ. ພາຍໃຕ້ລະບຽບການດັ່ງກ່າວ, ໂຄງການພັດທະນາໂຄງລ່າງພື້ນຖານ ທີ່ນໍາໃຊ້ນໍ້າໃນລໍານໍ້າຂອງໃນລະດູແລ້ງໃນອ່າງດຽວກັນ , ແລະ ໃນລະດູຝົນທີ່ມີການນໍາໃຊ້ລະຫວ່າງສອງອ່າງ, ຕ້ອງໄດ້ມີການດໍາເນີນຂະບວນການປຶກສາຫາລືກັນກ່ອນ. ບັນດາໂຄງການທີ່ຕ້ອງໄດ້ປະຕິບັດຕາມລະບຽບການດັ່ງກ່າວ ລວມມີ ໂຄງການຊົນລະປະທານຂະໜາດໃຫຍ່ ແລະ ໂຄງການພັດທະນາໄຟຟ້າພະລັງງານນໍ້າ ທີ່ສົ່ງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ, ການໄຫລຂອງນໍ້າ ແລະ ຄຸນນະພາບນໍ້າໃນແມ່ນໍ້າຂອງຕອນເທິງ.

ໃນຂະບວນການປຶກສາຫາລືກັນກ່ອນ, ບັນດາປະເທດສະມາຊິກທີ່ຖືກແຈ້ງ ຈະໄດ້ຮັບການສະໜັບສະໜູນທາງດ້ານວິຊາການ ແລະ ບໍລິຫານ ຈາກກອງເລຂາ ຄມສ  ໃນການປະເມີນຜົນກະທົບລະຫວ່າງຊາຍແດນ ຕໍ່ກັບສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ ຂອງ ຊຸມຊົນຕາມລໍານໍ້າຂອງ. ບັນດາປະເທດສະມາຊິກ ມີເປົ້າໝາຍໃນການປຶກສາຫາລື ກ່ຽວກັບວິທີການດໍາເນີນການຈັດຕັ້ງປະຕິບັດໂຄງການ. ຂະບວນການດັ່ງກ່າວ ບໍ່ໄດ້ມີເປົ້າໝາຍໃນການອະນຸມັດ ຫຼື ບໍ່ອະນຸມັດ ໂຄງການທີ່ຖືກສະເໜີ.

ຂະບວນການດັ່ງກ່າວນີ້ ໂດຍປົກກະຕິແລ້ວແມ່ນໃຊ້ເວລາຫົກເດືອນ, ແຕ່ຖ້າຈໍາເປັນກໍ່ສາມາດຂະຫຍາຍເວລາອອກໄດ້ ໂດຍການເຫັນດີຂອງຄະນະກໍາມະການຮ່ວມ ຄມສ ເຊິ່ງມີຜູ້ຕາງໜ້າໃນລະດັບຫົວໜ້າກົມ ຈາກບັນດາປະເທດສະມາຊິກເຂົ້າຮ່ວມເປັນສະມາຊິກ.

ໃນວັນທີ 13 ມິຖຸນາ 2018, ລັດຖະບານ ສປປ ລາວ ໄດ້ແຈ້ງ ກອງເລຂາ ຄມສ ໂດຍຜ່ານ ຄະນະກໍາມາທິການແມ່ນໍ້າຂອງແຫ່ງຊາດລາວ ໃນການສະເໜີດໍາເນີນຂະບວນການປຶກສາຫາລືກັນກ່ອນຢ່າງເປັນທາງການ

ຕໍ່ກັບໂຄງການເຂື່ອນໄຟຟ້າພະລັງງານນ້ຳປາກລາຍ, ເຊິ່ງເປັນເຂື່ອນທີ ສີ່ ທີ່ໄດ້ສະເໜີ ເຂົ້າໃນຂະບວນການ ປຶກສາຫາລືກັນກ່ອນ.

ໂຄງການດັ່ງກ່າວ ແມ່ນເຂື່ອນແບບນ້ຳໄຫຼຜ່ານ, ທີ່ຕັ້ງຢູ່ເມືອງປາກລາຍ ແຂວງໄຊຍະບູລີ ທີ່ຕັ້ງໃນເຂດ ພາກຕາເວັນຕົກສຽງເໜືອ ຂອງ ສປປ ລາວ ຫ່າງຈາກນະຄອນຫຼວງວຽງຈັນປະມານ 241 ກິໂລແມັດ. ເຂື່ອນດັ່ງກ່າວ ຈະໄດ້ມີການຜະລິດກະແສໄຟຟ້າຕະລອດປີ ເຊິ່ງຄວາມສາມາດກຳລັງການຜະລິດ ສະເລ່ຍຕໍ່ປີ ແມ່ນ 4,124 ກິໂລວັດໂມງ, ເຊິ່ງມີເປົ້າໝາຍສະໜອງໄຟຟ້າພາຍໃນປະເທດ.

ໂຄງການດັ່ງກ່າວຈະລົງທຶນປະມານ 2,134 ລ້ານໂດລາສະຫະລັດ ຈະເລີ້ມກໍ່ສ້າງ ໃນປີ 2022 ແລະ ດຳເນີນການຜະລິດ ພາຍຫຼັງທີ່ໂຄງການກໍ່ສ້າງສຳເລັດໃນປີ 2029. ບໍລິສັດພາວເວີ໌ໄຊນ່າ ຣີຊອຣ໌ສ ຈຳກັດ (PowerChina Resources Ltd) ແມ່ນຜູ້ພັດທະນາໂຄງການ, ໂດຍອີງຕາມການແຈ້ງຢ່າງເປັນທາງການ ຈາກ ສປປ ລາວ.

**ໝາຍເຫດ:**

ຄມສ ແມ່ນ ອົງການຈັດຕັ້ງລະຫວ່າງລັດຖະບານເພື່ອການປຶກສາຫາລື ແລະ ການຮ່ວມມືໃນອ່າງແມ່ນ້ຳຂອງຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມືກ່ຽວກັບນ້ຳ ແລະ ທັງເປັນສູນກາງຄວາມຮູ້ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາທີ່ຍືນຍົງຂອງພາກພື້ນ.

**- ຈົບ -**

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**

ທ່ານ ໂສພຽກ ແມ
ເຈົ້າໜ້າທີ່ການຂ່າວສື່ສານ
ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ext. 4070
ໂທລະສັບມືຖື: +856-20-92479737

###